ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-------- === --------

ອົງການໄອຍະການປະຊາຊົນສູງສຸດ

ເລກທີ 011/ອອປສ

ນະຄອນຫຼວງວຽງຈັນ, ວັນທີ 28/12/2015

# ຄຳແນະນຳ

**ເຖິງ:** ຫົວໜ້າກົມຕິດຕາມກວດກາຄະດີອາຍາ, ກົມຕິດຕາມກວດກາຄະດີແພ່ງ ອົງການໄອຍະກາປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນພາກ, ແຂວງ, ນະຄອນ ແລະ ຫົວໜ້າອົງການໄອຍະການປະຊາຊົນເຂດ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການລາຍງານຜົນການພິຈາລະນາຕັດສິນ ຫຼື ພິພາກສາຄະດີ ຂອງສານ.

**ອີງຕາມ** ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບປຸງ ປີ 2009 ມາດຕາ 27 ຂໍ້ 8, ມາດຕາ 30 ຂໍ້ 6 ແລະ ມາດຕາ 32 ຂໍ້ 6;

**ອີງຕາມ** ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012 ມາດຕາ 214 ແລະ ມາດຕາ 226;

**ອີງຕາມ** ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012 ມາດຕາ 262 ແລະ ມາດຕາ 290.

ເພື່ອເຮັດໃຫ້ຫົວໜ້າກົມຕິດຕາມກວດກາຄະດີອາຍາ, ກົມຕິດຕາມກວດກາຄະດີແພ່ງ ອົງການໄອຍະການປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນພາກ, ແຂວງ, ນະຄອນ ແລະ ຫົວໜ້າອົງການໄອຍະການປະຊາຊົນເຂດ ສາມາດປະຕິບັດສິດ ແລະ ໜ້າທີ່ ໃນການສະເໜີຄັດຄ້ານຄຳຕັດສິນ ຫຼື ຄຳພິພາກສາຄະດີຂອງສານຂັ້ນລຸ່ມ ໃຫ້ຖືກຕ້ອງຕາມກຳນົດເວລາ ທີ່ກົດໝາຍກຳນົດໄວ້ ແລະ ມີຄວາມເປັນເອກະພາບ.

## ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຈຶ່ງແນະນຳ ດັ່ງນີ້:

1. ຫົວໜ້າອົງການໄອຍະການປະຊາຊົນເຂດ ຕ້ອງລາຍງານຜົນການພິຈາລະນາຕັດສິນຄະດີຂອງສານປະຊາຊົນເຂດ ໃຫ້ຫົວໜ້າອົງການໄອຍະການປະຊາຊົນແຂວງ, ນະຄອນຊາບ ພາຍໃນກຳນົດເວລາ 07 ວັນ ນັບແຕ່ວັນທີ່ສານໄດ້ລົງຄຳຕັດສິນເປັນຕົ້ນໄປ;
2. ຫົວໜ້າອົງການໄອຍະການປະຊາຊົນແຂວງ, ນະຄອນ ຕ້ອງລາຍງານຜົນການພິຈາລະນາຕັດສິນຄະດີຂອງສານປະຊາຊົນແຂວງ, ນະຄອນ ເປັນຂັ້ນຕົ້ນ ແລະ ຂັ້ນອຸທອນ ໃຫ້ຫົວໜ້າອົງການໄອຍະການປະຊາຊົນພາກຊາບພາຍໃນກຳນົດເວລາ 07 ວັນ, ນັບແຕ່ວັນທີ່ສານໄດ້ລົງຄຳຕັດສິນ ຫຼື ຄຳພິພາກສາ ເປັນຕົ້ນໄປ;
3. ຫົວໜ້າອົງການໄອຍະການປະຊາຊົນພາກ ຕ້ອງລາຍງານຜົນການພິຈາລະນາພິພາກສາຄະດີ ເປັນຂັ້ນອຸທອນ ແລະ ຂັ້ນລົບລ້າງ ຂອງສານປະຊາຊົນພາກ ໃຫ້ຫົວໜ້າອົງການໄອຍະການປະຊາຊົນສູງສຸດຊາບ ພາຍໃນກຳນົດເວລາ 07 ວັນ, ນັບແຕ່ວັນທີ່ສານຂັ້ນອຸທອນ ຫຼື ຂັ້ນລົບລ້າງ ໄດ້ລົງຄຳພິພາກສາເປັນຕົ້ນໄປ.

- ການລາຍງານຜົນການພິຈາລະນາຕັດສິນ ຫຼື ພິພາກສາຄະດີ ຂອງສານ (ສຳລັບອົງການໄອຍະການປະຊາຊົນແຂວງ, ນະຄອນ ແລະ ອົງການໄອຍະການປະຊາຊົນເຂດ) ທີ່ສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແລະ ຖະແຫຼງຕໍ່ສານຂັ້ນຕົ້ນນັ້ນ ຕ້ອງລາຍງານການສັ່ງຟ້ອງ, ການຖະແຫຼງຂອງຕົນ ພ້ອມທັງຜົນການພິຈາລະນາຕັດສິນຄະດີ

ຂອງສານ; ອົງການໄອຍະການປະຊາຊົນແຂວງ, ນະຄອນ ທີ່ຖະແຫຼງເປັນຂັ້ນອຸທອນ ແລະ ອົງການໄອຍະການປະຊາຊົນພາກ ທີ່ຖະແຫຼງເປັນຂັ້ນອຸທອນ ແລະ ຂັ້ນລຶບລ້າງ ແມ່ນໃຫ້ລາຍງານການຖະແຫຼງຂອງຕົນພ້ອມທັງຜົນການພິຈາລະນາພິພາກສາຄະດີຂອງສານ ຕໍ່ຫົວໜ້າອົງການໄອຍະການປະຊາຊົນຂັ້ນເທິງທີ່ຖັດຕົນຊາບ.

ໃຫ້ຫົວໜ້າອົງການໄອຍະການປະຊາຊົນ ແຕ່ລະຂັ້ນຊີ້ນໍາບັນດາກົມ, ພະແນກ ແລະ ຂະແໜງ (ຄະດີອາຍາ ແລະ ຄະດີແພ່ງ) ຮັບຜິດຊອບຄົ້ນຄ້ວາພິຈາລະນາຜົນຂອງການພິຈາລະນາຕັດສິນ ຫຼື ພິພາກສາຄະດີ ທີ່ອົງການໄອຍະການປະຊາຊົນຂັ້ນລຸ່ມສົ່ງໃຫ້ນັ້ນ ແລ້ວລາຍງານຕໍ່ຫົວໜ້າອົງການໄອຍະການປະຊາຊົນຂັ້ນຂອງຕົນ ເພື່ອມີຄໍາເຫັນ.

ດັ່ງນັ້ນ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຈຶ່ງແນະນໍາມາຍັງຫົວໜ້າກົມຕິດຕາມກວດກາຄະດີອາຍາ, ຕິດຕາມກວດກາຄະດີແພ່ງ ອົງການໄອຍະການປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນພາກ, ແຂວງ, ນະຄອນ ແລະ ຫົວໜ້າອົງການໄອຍະການປະຊາຊົນເຂດ ເພື່ອຈັດຕັ້ງປະຕິບັດໃຫ້ຖືກຕ້ອງຕາມຄໍາແນະນໍາຢ່າງເຂັ້ມງວດ.

ຄໍາແນະນໍາສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າອົງການໄອຍະການປະຊາຊົນສູງສຸດ**

**ຄໍາສານ ສຸວົງ**

**ບ່ອນສົ່ງ:**
- ກໍາມະທິການກົດໝາຍສະພາແຫ່ງຊາດ ເພື່ອຊາບ;
- ສານປະຊາຊົນສູງສຸດ 01 ສະບັບ ເພື່ອຊາບ;
- ກະຊວງຍຸຕິທໍາ 01 ສະບັບ ເພື່ອຊາບ;
- ກົມຕິດຕາມກວດກາການດໍາເນີນຄະດີອາຍາ ແລະ ກົມຕິດຕາມກວດກາການດໍາເນີນຄະດີແພ່ງ ອົງການໄອຍະການປະຊາຊົນສູງສຸດ, ບັນດາ ອົງການໄອຍະການປະຊາຊົນພາກ, ແຂວງ, ນະຄອນ ແລະ ເຂດ ບ່ອນລະ 01 ສະບັບ ເພື່ອປະຕິບັດ;
- ສໍາເນົາ 02 ສະບັບ.